**SD CS** San Diego City Schools

*Fact Sheet*

ລະດູໃບໄມ້ລົ່ນ 2005

# ຂໍ້ສອບເສັງຂັ້ນມາຕຖານຣັຖຄາລີຟເນັຍ (CST)

ຂໍ້ສອບເສັງມາຕຖານຣັຖຄາລີຟເນັຍ (CSTs) ເຫລົ່ານີ້ແມ່ນສອບເສັງກັບພວກນັກຮຽນທີ່ເຂົ້າຮຽນໃນໂຮງຮຽນຫລວງຊັ້ນປີທີ 2 ເຖີງ 11 ຊຶ່ງເປັນພາກສ່ວນຂອງໂຄງການສອບເສັງຂັ້ນມາຕຖານ ແລະ ລາຍງານ (STAR). ໂຄງການ **STAR** ປະກອບດ້ວຍ ສີ່ພາກ: ຂໍ້ສອບເສັງຂັ້ນມາຕຖານຣັຖຄາລີຟເນັຍ (CST), ຂໍ້ສອບເສັງຄວາມສຳເຣັດຣັຖຄາລີຟເນັຍ, ຄັ້ງທີຫົກ (CAT/6), ຂໍ້ສອບເສັງການຮຽນສັບປ່ຽນຣັຖຄາລີຟເນັຍ (CAPA), ແລະ ຂໍ້ສອບເສັງ ອາເປຣັນດາ 3 (Aprenda 3).

ຂໍ້ສອບເສັງມາຕຖານຣັຖຄາລີຟເນັຍ (CSTs) ໃນວິຊາອັກສອນສາດພາອັງກິດ, ຄະນິດສາດ, ວິທຍາສາດ, ແລະ ປວັດສາດ/ສັງຄົມວິທຍາ ປະກອບດ້ວຍຂໍ່ຕ່າງໆທີ່ຈັດຂຶ້ນສະເພາະເຈາະຈົງເພາະສອບເສັງພວກນັກຮຽນສຳຫລັບເນື້ອໃນຂັ້ນມາຕຖານຣັຖຄາລີຟເນັຍ. ສະພາສຶກສາຂອງຣັຖໄດ້ນຳເອົາເນື້ອໃນຂັ້ນມາຕຖານມາໃຊ້ເພື່ອເຈາະຈົງໃຫ້ນັກຮຽນທຸກໆຄົນໃນຣັຖຄາລີຟເນັຍມີຄວາມສາມາດຮູ້ ແລະ ສາມາດຮຽນ. ເນື້ອໃນມາຕຖານນີ້ຈັດເປັນຊັ້ນ ແລະ ເປັນຫ້ອງວິຊາສະເພາະເຈາະຈົງ. ຂໍ້ສອບເສັງມາຕຖານ 2006 ນີ້ ຮຽກຮ້ອງໃຫ້ພວກນັກຮຽນທີ່ເຂົ້າຮຽນຕໍ່ໄປຂອງຊັ້ນຮຽນ/ຫ້ອງວິຊາຮຽນ ໃນເວລາມີການສອບເສັງຫລືຜູ້ທີ່ຈົບການຮຽນໃນສົກປີ 2005–06.

## ອັກສອນສາດພາສາອັງກິດ (ELA)

ພວກນັກຮຽນທຸກໆຄົນໃນຊັ້ນຮຽນປີທີ 2 ເຖີງ 11 ຕ້ອງໄດ້ທຳການສອບເສັງ CST ດ້ານອັກສອນສາດພາສາອັງກິດ (ວິຊາອ່ານ ແລະ ວິຊາຂຽນ). ພວກນັກຮຽນປີທີ 4 ແລະ 7 ທີ່ສອບເສັງ CST ນັ້ນຈະໄດ້ສອບເສັງພາກວິຊາຂຽນຄືກັນ.

## ຄະນິດສາດ (Mathematics)

ພວກນັກຮຽນທຸກໆຄົນຈາກຊັ້ນຮຽນປີທີ 2 ເຖີງ 7 ຕ້ອງໄດ້ສອບເສັງຄະນິດສາດຕາມຊັ້ນລະດັບຮຽນ. ນັກຮຽນໃນຊັ້ນປີທີ 8 ເຖີງ 11 ທີ່ໄດ້ສອບເສັງສຳເຣັດແລ້ວ ຫລື ຈະໄດ້ສອບເສັງພຶຊຄະນິດ I, ເຣຂາຄະນິດ, ພຶຊຄະນິດ II, ຫລື ເລກລວມປີທີ 1, ປີທີ 2, ຫລື ປີທີ 3 ຕ້ອງໄດ້ສອບເສັງເໝາະສົມຕາມຊັ້ນລະດັບຮຽນ. ພວກນັກຮຽນປີທີ 8 ແລະ 9 ທີ່ຍັງບໍ່ທັນສອບເສັງ ຫລື ບໍ່ໄດ້ສອບເສັງນຶ່ງໃນຈຳນວນຫ້ອງວິຊາເຫລົ່ານີ້ນັ້ນ ຈະໄດ້ສອບເສັງວິຊາເລກທົ່ວໄປ. ພວກນັກຮຽນຊັ້ນຮຽນປີທີ 10 ຫລື 11 ທີ່ໄດ້ສອບເສັງສຳເຣັດແລ້ວ ຫລື ຈະໄດ້ສອບເສັງພຶຊຄະນິດ II ຫລື ເລກລວມປີທີ 3 ນັ້ນຈະໄດ້ສອບເສັງວິຊາເລກຊັ້ນຮຽນມັທຍົມ.

## ປວັດສາດ/ສັງຄົມວິທຍາ (History/Social Sience)

ພວກນັກຮຽນຊັ້ນຮຽນປີທີ 8, 10, ແລະ 11 ທຸກໆຄົນຕ້ອງໄດ້ສອບເສັງປວັດສາດ/ສັງຄົມວິທຍາຕາມລະດັບຊັ້ນຊັ້ນຮຽນ.

## ວິທຍາສາດ (Science)

ພວກນັກຮຽນຊັ້ນຮຽນປີທີ 5 ທຸກໆຄົນຕ້ອງໄດ້ສອບເສັງວິທຍາສາດ ແລະ ພວກນັກຮຽນຊັ້ນຮຽນປີທີ 9 ເຖີງ 11 ຜູ້ທີໄດ້ສອບເສັງສຳເຣັດແລ້ວ ຫລື ຈະໄດ້ສອບເສັງທໍຣະນີວິທຍາ, ຊີວະສາດ, ເຄມີສາດ, ຫລື ວິຊາຟີຊິກ ສອບເສັງຕາມລະດັບຊັ້ນຮຽນ.

## ຂໍ້ສລູບ

- ຂໍ້ສອບເສັງມາຕຖານຣັຖຄາລີຟເນັຍ (CSTs) ເຫລົ່ານີ້ແມ່ນເປັນຫລັກເກນອ້າງອີງ. ຜົນສອບເສັງຕ່າງໆອີງຕາມຄວາມສາມາດທີ່ນັກຮຽນສຳເຣັດເນື້ອໃນຂັ້ນມາຕຖານຂອງວິຊາຮຽນທີ່ຣັຖນຳມາໃຊ້, ບໍ່ແມ່ນອີງຕາມການປຽບທຽບຄະແນນກັນກັບນັກຮຽນຄົນອື່ນໆທີ່ສອບເສັງຂໍ້ສອບອັນດຽວກັນນັ້ນ.
- ຂໍ້ສອບເສັງ CST ດ້ານອັກສອນສາດພາສາອັງກິດ (ELA) ແມ່ນສອບເສັງກັບພວກນັກຮຽນປີທີ 2–11 ທຸກໆຄົນ.
- ຂໍ້ສອບເສັງ CST ດ້ານຄະນິດສາດແມ່ນສອບເສັງກັບພວກນັກຮຽນປີທີ 2–7 ທຸກໆຄົນ.
- ຂໍ້ສອບເສັງ CST ສຳເພາະແຕ່ວິຊາຄະນິດສາດແມ່ນສອບເສັງກັບພວກນັກຮຽນປີທີ 8–11.
- ຂໍ້ສອບເສັງ CST ດ້ານປວັດສາດ/ສັງຄົມວິທຍາແມ່ນສອບເສັງກັບພວກນັກຮຽນປີທີ 8,10 ແລະ ປີທີ 11 ທຸກໆຄົນ.
- ຂໍ້ສອບເສັງ CST ດ້ານວິທຍາສາດແມ່ນສອບເສັງກັບພວກນັກຮຽນປີທີ 5, 8 ແລະ ປີທີ 10 ທຸກໆຄົນ.
- ຂໍ້ສອບເສັງ CST ສຳເພາະແຕ່ ວິທຍາສາດນີ້ແມ່ນສອບເສັງກັບພວກນັກຮຽນປີທີ 9–11.

*ພິມແຈກຢາຍໂດຍການຊ່ວຍເຫລືອຂອງມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Standards, Assessment, and Accountability: (619) 725-7166**
**Media inquires: (619) 725-5578**

www.sandi.net

*revised 09/21/2005*

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດີເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລີຟເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.). ສູນກາງສຶກສາແຊນດີເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກແຕ່ຊັ້ນກຽມອະນຸບານເຖີງປີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

---

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດີເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ
ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.